ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 47 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 18 DEC 2014

ສຳນັກງານ ຄຄຊ
ເລກທີ 1575
ວັນທີ 18/12/2014
ໂທລະສັບ 021 217770

**ລາຍງານການເຄື່ອນໄຫວປະຈຳອາທິດ**

**01-05/12/2014 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**

**ຂອງທະນາຄານແຫ່ງ ສປປ ລາວ**

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນ: (1) ຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາບໍ່ດີ ເປັນຕົ້ນແມ່ນຕົວເລກພິມສຳຫຼວດດັດສະນີຄວາມເຊື່ອໝັ້ນຜູ້ບໍລິໂພກ ຫຼຸດລົງ ຈາກ 94,5 ໃນເດືອນ 10/2014 ເປັນ 88,7 ໃນເດືອນ 11/2014, ດັດສະນີລາຄາບ້ານ ຫຼຸດລົງ ຈາກ 173,78 ໃນເດືອນ 9/2014 ເປັນ 173,72 ໃນເດືອນ 10/2014 ແລະ ຈຳນວນຜູ້ຂໍສະຫວັດດີການວ່າງງານປະຈຳອາທິດທີ 22/11/2014 ເພີ່ມຂຶ້ນຈາກ 292.000 ຄົນ ເປັນ 313.000 ຄົນ; (2) ຕົວເລກທາງດ້ານເສດຖະກິດຂອງຂົງເຂດເອີຣົບອອກມາດີ ເປັນຕົ້ນແມ່ນຕົວເລກການສົ່ງອອກຂອງເຢຍລະມັນ ໃນໄຕມາດ 03/2014 ເພີ່ມຂຶ້ນ 1,9% ທຽບໃສ່ໄຕມາດຜ່ານມາ. ສ່ວນຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກການຜະລິດຍານພາຫະນະຂອງຍີ່ປຸ່ນໃນເດືອນ 10/2014 ຫຼຸດລົງ 6,3% ທຽບໃສ່ປີຜ່ານມາ ແລະ ຕົວເລກດັດຊະນີພາກການຜະລິດຂອງ ສປ.ຈີນ ຫຼຸດລົງຈາກ 50,8 ໃນເດືອນ 10/2014 ເປັນ 50,3 ໃນເດືອນ 11/2014.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 19-25/11/2014 | ອາທິດນີ້ 26/11-02/12/2014 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ ໂດລາ | 1,2427 | 1,2444 | -0,13% |
| ໂດລາ/ເຢນ | 118,00 | 118,73 | -0,61% |
| ໂດລາ/ບາດ | 32,80 | 32,89 | -0,25% |
| ໂດລາ/ເປໂຊ | 44,95 | 44,88 | 0,16% |
| ໂດລາ/ຣູເປຍ | 1.2160,56 | 12259,89 | -0,81% |
| ໂດລາ/ໂດລາສິງກະໂປ | 1,3024 | 1,3078 | -0,41% |
| ໂດລາ/ຢວນ | 6,1392 | 6,1477 | -0,14% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 14,34% ຈາກ 75,77 ໂດລາ/ບາເຣວ ມາເປັນ 64,63 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງໂລກຫຼຸດລົງ ເປັນຕົ້ນແມ່ນສະຫະລັດ ເນື່ອງຈາກຕົວເລກທາງດ້ານເສດຖະກິດອອກມາບໍ່ຄ່ອຍດີ ບວກກັບນັກລົງທຶນຫຼຸດຜ່ອນການລົງທຶນໃນນ້ຳມັນລົງ ເຫັນໄດ້ຈາກຄັງສຳຮອງນ້ຳມັນດິບປະຈຳອາທິດທີ 21/11/2014 ເພີ່ມຂຶ້ນ 2,8 ລ້ານບາເຣວ. ໃນຂະນະທີ່, ນັກລົງທຶນມີຄວາມເຊື່ອໝັ້ນຕໍ່ການສະໜອງນ້ຳມັນຈາກກຸ່ມປະເທດຜູ້ສົ່ງອອກນ້ຳມັນ (OPEC) ທີ່ມີມະຕິຈະບໍ່ປັບຫຼຸດອັດຕາການຜະລິດນ້ຳມັນໄວ້ທີ່ 30 ລ້ານບາເຣວ/ວັນ.

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 2,74% ຈາກ 1.198,28 ໂດລາ/ອອນ ມາເປັນ 1.157,02 ໂດລາ/ອອນ ຍ້ອນນັກລົງທຶນສືບຕໍ່ເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,01% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,17% ສຳລັບອັດຕາຕະຫຼາດ. ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,07% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,08% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 19-25/11/2014 | | | ອາທິດນີ້ 26/11-02/12/2014 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.035,08 | 8.064,91 | 8.047,24 | 8.039,16 | 8.069,79 | 8.047,88 | -0,05% | -0,06% | -0,01% |
| ບາດ | 246,67 | 247,90 | 247,54 | 246,58 | 247,78 | 247,36 | 0,04% | 0,05% | 0,07% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.068,27 | 8.091,33 | 8.079,80 | 8.075,02 | 8.112,00 | 8.093,51 | -0,08% | -0,25% | -0,17% |
| ບາດ | 250,98 | 252,47 | 251,73 | 250,79 | 252,23 | 251,51 | 0,08% | 0,09% | 0,08% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,41% | 0,33% | 0,40% | 0,45% | 0,52% | 0,57% | | | |
| ບາດ | 1,75% | 1,84% | 1,69% | 1,71% | 1,80% | 1,68% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ຫຼຸດລົງ 0,61% ທຽບໃສ່ວັນທີ 28/11/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 62,88%.
- ປະລິມານເງິນ $M_2$ ເພີ່ມຂຶ້ນ 0,72% ເມື່ອທຽບໃສ່ວັນທີ 28/11/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 20,44%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (ວັນທີ 25/11-01/12/2014) ເຫັນວ່າ ທທກ ຊື້ໂດລາສຸດທິ 11,42 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 56,47 ລ້ານໂດລາ ແລະ ຂາຍໂດລາໄດ້ 45,05 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 325,54 ລ້ານບາດ (ໃນນີ້ ຊື້ບາດໄດ້ 485,42 ລ້ານບາດ ແລະ ຂາຍບາດໄດ້ 810,96 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 55,87% ແຕ່ເພີ່ມຂຶ້ນ 28,82% ສຳລັບເງິນບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 4,80 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 65,94 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 7,75 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 151 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 5,08 ລ້ານໂດລາ ແລະ ຊື້ບາດໄດ້ສຸດທິ ຈຳນວນ 508,74 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດຜ່ານມາ 18-24/11/2014 | | ອາທິດນີ້ 25/11-01/12/2014 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 92.34 | 88.38 | 23.14 | 139.85 | -74.95% | 58.25% |
| - ທ/ຄທຸລະກິດອື່ນໆ | 38.61 | 128.02 | 33.33 | 345.57 | -13.68% | 169.93% |
| ລວມຊື້: | 130.95 | 216.40 | 56.47 | 485.42 | -56.88% | 124.32% |
| 2. ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 78.53 | 213.99 | 21.01 | 219.91 | -73.24% | 2.77% |
| - ທ/ຄທຸລະກິດອື່ນໆ | 20.58 | 575.94 | 24.04 | 591.05 | 16.77% | 2.62% |
| ລວມຂາຍ: | 99.11 | 789.92 | 45.05 | 810.96 | -54.55% | 2.66% |
| ຊື້-ຂາຍສຸດທິ ທທກ | 31.84 | -573.52 | 11.42 | -325.54 | -64.15% | -43.24% |
| ຜິດດ່ຽງ ຊື້-ຂາຍ | 24.32 | -265.03 | 20.22 | -67.06 | -409.77% | 197.29% |
| ມູນຄ່າການຊື້-ຂາຍ | 230.06 | 1,006.32 | 101.52 | 1,296.39 | -55.87% | 28.82% |
| 3. ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0.00 | 0.00 | 1.00 | 0.00 | | |
| - ທຫລ ຂາຍໃຫ້ ທທກ | 23.72 | 255.00 | 8.75 | 151.00 | | |
| ຊື້-ຂາຍສຸດທິ ທຫລ | -23.72 | -255.00 | -7.75 | -151.00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 3.30 | 66.53 | 4.80 | 65.94 | | |
| 5. ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 10.99 | 129.48 | 1.23 | 508.74 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 4.01 | 0.00 | 6.31 | 0.00 | | |
| ຊື້-ຂາຍສຸດທິ ທຫລ | 6.98 | 129.48 | -5.08 | 508.74 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 12/2014 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 2,95% ເພີ່ມຂຶ້ນ 0,14% ຈາກ 2,81% ໃນເດືອນ 11/2014.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 41,19 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 46% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 678 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 13,63% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 365,34 ຕື້ກີບ ຫຼຸດລົງ 20,08% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (28/11-4/12/2014) ມີຈຳນວນ 880 ຄັ້ງ ໂດຍມີມູນຄ່າ 169,39 ຕື້ກີບ ຫຼຸດລົງ 21,1% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 330 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.400,85 ຈຸດ ຫຼຸດລົງ -1,50% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 888.565 ຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 6,24 ຕື້ກີບ ເພີ່ມຂຶ້ນ 697,35% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 39,70% ຂອງມູນຄ່າການຊື້-ຂາຍທັງໝົດ. ໃນວັນທີ 03 ທັນວາ ທີ່ຜ່ານມາ ຕະຫຼາດຫຼັກຊັບລາວ ໄດ້ປັບປ່ຽນວິທີການຈັບຄູ່ການຊື້-ຂາຍ ຈາກ 6 ຄັ້ງ/ມື້ ເປັນການຈັບຄູ່ແບບຕໍ່ເນື່ອງ ແລະ ໄດ້ເພີ່ມຂອບເຂດການປ່ຽນແປງລາຄາຈາກ ±5% ເປັນ ±10%.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.137 ກີບ/ຮຸ້ນ ຫຼຸດລົງ 332 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 55.034 ຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 392,78 ລ້ານກີບ ເພີ່ມຂຶ້ນ 114,20% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 41,26% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,52%[2].

ຮຸ້ນຂອງບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.024 ກີບ/ຮຸ້ນ ຫຼຸດລົງ 34 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 833.481 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,85 ຕື້ກີບ ເພີ່ມຂຶ້ນ 878,02% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 37,70% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,26%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.900 ກີບ/ຮຸ້ນ ບໍ່ປ່ຽນແປງເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 50 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,39 ລ້ານກີບ ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,71%[4].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສຳເລັດການພັດທະນາໂມດູນ Forward contract ໃນລະບົບໂປແກຣມ Interbank (version 1) ແລະ ກຳລັງກະກຽມຄູ່ມືການນຳໃຊ້;
- ສຳເລັດການສະເໜີໃຫ້ໂຄງການ GIZ-AFP ສະໜັບສະໜູນຄ່າໃຊ້ຈ່າຍການບຳລຸງຮັກສາລະບົບ FinA ເຊິ່ງຍົກລະດັບຈາກ Basic package ເປັນລະດັບ Gold package;
- ສຳເລັດການລາຍງານແຜນງານໂຄງການ ໄລຍະ 3 ຂອງໂຄງການ AFP ໃຫ້ແກ່ຄະນະກົມ, ຄະນະຜູ້ວ່າການ ເພື່ອຂໍອະນຸມັດລາຍເຊັນ ຮ່ວມກັບໂຄງການ GIZ-AFP;
- ສຳເລັດການຕີລາຄາຜົນໄດ້ຮັບຈາກການເຂົ້າຮ່ວມສຳມະນາໂຄງການ SEACEN ປະຈຳປີ 2014;
- ສຳເລັດການພິມໃບຖອນເງິນສົດໃຫ້ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈຳນວນ 5.000 ຫົວ;
- ສຳເລັດການຕ້ອນຮັບ: ❶ ຕ້ອນຮັບ ທ່ານ ເອກອັກຄະລັດຖະທູດຍີ່ປຸ່ນ, ປະຈຳ ສປປ ລາວ ທີ່ເດີນທາງເຂົ້າຢ້ຽມຢາມຂໍ່ານັບ ທ່ານ ຜູ້ວ່າການ ທຫລ ທີ່ ທຫລ, ❷ ຕ້ອນຮັບຊ່ຽວຊານ IFC ທີ່ໄດ້ເຂົ້າຢ້ຽມຢາມຂໍ່ານັບ ທ່ານ ຮອງຜູ້ວ່າການ

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດຂອງ ແມ່ນບໍ່ມີການົດ.

ທຫລ ເພື່ອປຶກສາຫາລື ແລະ ນຳສະເໜີຄວາມເປັນໄປໄດ້ກ່ຽວກັບການປັບປຸງຂໍ້ມູນຂ່າວສານສິນເຊື່ອ (CIB) ຂອງ ທຫລ, ❸ ຕ້ອນຮັບຄະນະທີມງານຈາກທະນາຄານໂລກ ທີ່ໄດ້ເຂົ້າຢ້ຽມຂໍ່ານັບ ທ່ານ ຮອງຜູ້ວ່າການ ທຫລ ເພື່ອສະຫຼຸບ ຄືນຈຸດປະສົງເປົ້າໝາຍໃນການມາເຮັດວຽກຂອງຄະນະທີມງານດັ່ງກ່າວ ແລະ ປຶກສາຫາລືແຜນການຊ່ວຍເຫຼືອລ້າທາງ ວິຊາການ;

- ສຳເລັດການເຂົ້າພົບປະ ແລະ ປຶກສາຫາລືຂອງຄະນະອຸປະທູດຍີ່ປຸ່ນ, ປະຈຳ ສປປ ລາວ ເພື່ອປຶກສາຫາລືການຜະລິດ ຫຼຽນສາຍພົວພັນລາວ-ຍີ່ປຸ່ນ ຮ່ວມກັບກົມເງິນຕາ ທຫລ;
- ສຳເລັດການມາເຮັດວຽກຮ່ວມກັນລະຫວ່າງ ທຫລ ແລະ ທປທ ກ່ຽວກັບແຜນພັດທະນາບຸກຄະລາກອນປະຈຳປີ 2014;
- ສຳເລັດການຈັດພິທີເຊັນສັນຍາວ່າດ້ວຍການຈັດຕັ້ງປະຕິບັດ ໂຄງການ LAPS ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານພັດທະນາແຫ່ງຊາດຈີນ CDB ທີ່ ສປປ ລາວ;
- ສຳເລັດການຈັດກອງປະຊຸມສຳມະນາ ກ່ຽວກັບຕະຫຼາດລະຫວ່າງທະນາຄານ (Interbank Market) ໃຫ້ແກ່ ພະນັກງານ ທຫລ;
- ສຳເລັດການເຂົ້າຮ່ວມກອງປະຊຸມສະຫຼຸບຜົນການຈັດຕັ້ງປະຕິບັດໂຄງການ (MAFIPP) ປະຈຳສົກປີ 2013 ແລະ ແຜນ ວຽກປີ 2014-2015;
- ສຳເລັດຄົ້ນຄວ້າມາດຕະຖານບັນຊີສາກົນ IAS 34 ແລະ IAS37;

III. <u>**ແຜນວຽກຈຸດສຸມອາທິດຕໍ່ໄປ:**</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນ ລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ ແລະ ລົງກວດກາເບິ່ງຄວາມພ້ອມ ເພື່ອສະເໜີຕໍ່ຂັ້ນເທິງໃນການຮັບເອົາທະນາຄານ ເຄເທ່ ເຂົ້າເປັນສະມາ ຊິກຂອງ CIB ຕາມການສະເໜີຂອງທະນາຄານດັ່ງກ່າວ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າການສະເໜີຂອງໂຄງການ AFP ຕໍ່ການສະເໜີພິຈາລະນາເອົາຕົວແທນຈາກທະນາຄານທຸລະ ກິດລັດເຂົ້າຮ່ວມໃນສະພາບໍລິຫານ NSOs, ❷ ຄົ້ນຄວ້າຄູ່ມືກ່ຽວກັບຄວາມໂປ່ງໃສ ແລະ ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ (FATF Guidance), ❸ ຄົ້ນຄວ້າການບັນທຶກບັນຊີ ກ່ຽວກັບເຄື່ອງມືອະນຸພັນທາງການເງິນ ລົງເລິກ "Forward Rate Agreement" ໃຫ້ສຳເລັດຂັ້ນວິຊາການ, ການເພີ່ມໝາຍເລກບັນຊີ, ການບັນທຶກບັນຊີ ກ່ຽວກັບອາກອນເຍື້ອນ ຊຳລະ ແລະ ຄ່າເສື່ອມພັນທະບັດ ຕາມການສະເໜີຂອງທະນາຄານການຄ້າຕ່າງປະເທດລາວ, ❹ ຄົ້ນຄວ້າກ່ຽວກັບການ ສ້າງລະບົບຕ້ານການຟອກເງິນທີ່ທັນສະໄໝ ໂດຍສະເພາະແມ່ນລະບົບ IT, ❺ ຄົ້ນຄວ້າເນື້ອໃນຂອງຫຼັກການບາແຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການບາແຊວ 2, ❻ ຄົ້ນຄວ້າເນື້ອ ໃນຂອງຫຼັກການບາແຊວ 2ໃນແຕ່ລະ Pillar ໂດຍລົງເລິກບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງ ທະນາຄານ ຕາມຫຼັກການບາແຊວ 2 ເພື່ອເປັນໝາກຜົນໃນການລາຍງານກອງປະຊຸມຄົບຄະນະບາແຊວ 2 ຄັ້ງທີ V.

ແທນ ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ຄຳແກ້ວ ວິສີສົມບັດ